Ch

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

2184

ກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ

ເລກທີ: 2184 /ຄຂປກ

ວັນທີ: 03 JUL 2006

# ຂໍ້ຕົກລົງ ຂອງ ລັດຖະມົນຕີວ່າການ

# ວ່າດ້ວຍ ການອໍານວຍຄວາມສະດວກໃຫ້ແກ່ການຂົນສົ່ງສິນຄ້າຂ້າມແດນ

- ອີງຕາມ ແຜນງານບູລິມະສິດ ຂອງລັດຖະບານ ເພື່ອຫັນ ສປປລາວ ກາຍເປັນປະເທດບໍລິການທາງຜ່ານ
- ອີງຕາມ ກອງປະຊຸມ ຄັ້ງວັນທີ 30/05/2006 ທີ່ຈັດຂຶ້ນຢູ່ ກະຊວງ ຄຂປກ ກ່ຽວກັບການປຶກສາຫາລືຄວາມອາດສາມາດເພີ່ມນໍ້າໜັກບັນທຸກຂອງລົດຂົນສົ່ງສິນຄ້າຂ້າມແດນຢູ່ ສປປລາວ
- ອີງຕາມ ກອງປະຊຸມລະຫວ່າງ ລັດຖະບານ ແລະ ນັກທຸລະກິດ ຄັ້ງວັນທີ 31/05/2006 ທີ່ ໂຮງແຮມ ລາວພລາຊາ, ນະຄອນຫຼວງວຽງຈັນ

## ລັດຖະມົນຕີວ່າການ ຕົກລົງ:

**<u>ມາດຕາ1:</u>** ອະນຸຍາດໃຫ້ເພີ້ມນໍ້າໜັກບັນທຸກຂອງພາຫະນະຂົນສົ່ງ ສໍາລັບເສັ້ນທາງຫຼວງແຫ່ງຊາດເລກ 9 (ສະຫັວນນະເຂດ-ມຸກດາຫານ) ຊຶ່ງເປັນເສັ້ນທາງຕາເວັນອອກ-ຕາເວັນຕົກ ແລະ ເສັ້ນທາງຫຼວງແຫ່ງຊາດໝາຍເລກ 3 (ບໍ່ເຕັນ - ຫ້ວຍຊາຍ) ໄດ້ 11 ໂຕນ/ເພົາ (ຕາມຕາຕະລາງຄັດຕິດມາພ້ອມນີ້) ຫຼັງຈາກສໍາເລັດການກໍ່ສ້າງ ຍົກລະດັບສອງເສັ້ນທາງດັ່ງກ່າວ.

**<u>ມາດຕາ2:</u>** ສໍາລັບເສັ້ນທາງອື່ນໆ, ໃຫ້ ກົມຂົວທາງ ແລະ ກົມຂົນສົ່ງ ສົມທົບກັບ ພະແນກ ຄຂປກ ປະຈໍາບັນດາແຂວງ ແລະ ນະຄອນຫຼວງ ດໍາເນີນການສໍາຫຼວດ ເພື່ອສ້າງແຜນການຍົກລະດັບຄວາມອາດສາມາດຮັບນໍ້າໜັກຂອງເສັ້ນທາງ ໃຫ້ທຽບເທົ່າກັບເສັ້ນທາງຫຼວງແຫ່ງຊາດໝາຍເລກ 9 ແລະ ເສັ້ນທາງຫຼວງແຫ່ງຊາດໝາຍເລກ 3.

**<u>ມາດຕາ3:</u>** ໃຫ້ ກົມແຜນການ ແລະ ການຮ່ວມມື ເປັນເຈົ້າການປະສານສົມທົບ ກັບ ກົມຂົວທາງ ແລະ ກົມຂົນສົ່ງ ສ້າງແຜນການປັບປຸງບູລະນະຮັກສາເສັ້ນທາງຕ່າງໆ ເພື່ອຍົກລະດັບຄວາມອາດສາມາດຮັບນໍ້າໜັກຂອງເສັ້ນທາງ ໃຫ້ສູງຂຶ້ນເທື່ອລະກ້າວ.

**<u>ມາດຕາ4:</u>** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການ.

<u>ບ່ອນສົ່ງ:</u>

- ຫ້ອງວ່າການສູນກາງພັກ
- ຫ້ອງວ່າການ ສໍານັກງານນາຍົກລັດຖະມົນຕີ
- ພະແນກ ຄຂປກ ປະຈໍາບັນດາ ແຂວງ ແລະ ນະຄອນຫຼວງ

ສົມມາດ ພົລເສນາ

# ຕາຕະລາງ ນ້ຳໜັກລວມສູງສຸດ ຂອງລົດບັນທຸກ ທີ່ອະນຸຍາດ 11 ໂຕນ ຕໍ່ ເພົາ.

| ລ/ດ | ປະເພດລົດ | ຮູບສະແດງປະເພດລົດ | ນ້ຳໜັກລວມສູງສຸດ ທີ່ອະນຸຍາດ (ກິໂລກຣາມ) |
|---|---|---|---|
| 1 | I ລົດບັນທຸກດ່ຽວ<br>**RIGID TRUCK**<br>**2 ເພົາ 4 ຕີນ** |  | **9.500** |
| 2 | **2 ເພົາ 6 ຕີນ** |  | **15.000** |
| 3 | **3 ເພົາ 6 ຕີນ** |  | **17.000** |
| 4 | **3 ເພົາ 10 ຕີນ** |  | **25.000** |
| 5 | **3 ເພົາ 6 ຕີນ** |  | **13.500** |
| 6 | **3 ເພົາ 8 ຕີນ** |  | **17.500** |

| | | | |
|---|---|---|---|
| 7 | 4 ເພົາ 8 ຕີນ |  | 22.500 |
| 8 | 4 ເພົາ 12 ຕີນ |  | 29.500 |
| 9 | II ລົດລາກ<br>SEMI-TRAILER<br>TRUCK<br>3 ເພົາ 10 ຕີນ |  | 26.000 |
| 10 | 4 ເພົາ 14 ຕີນ |  | 36.000 |
| 11 | 4 ເພົາ 14 ຕີນ |  | 35.000 |
| 12 | 5 ເພົາ 18 ຕີນ |  | 45.000 |

| | | | |
|---|---|---|---|
| | |  | |
| 14 | III ພ່ວງ<br>TRAILER<br>2 ເພົາ 4 ຕີນ |  | 14.000 |
| 15 | 2 ເພົາ 6 ຕີນ |  | 18.000 |
| 16 | 2 ເພົາ 8 ຕີນ |  | 22.000 |
| 17 | 3 ເພົາ 12 ຕີນ |  | 31.000 |